## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 1 ພຶສພາ 2022 (05-01-2022)

---

## ຮູ້ວ່າແມ່ນຫຍັງກຳລັງມາ

*ເມື່ອໃດທ່ານດີໃຈທີ່ຄົ້ນພົບວ່າທ່ານບໍ່ໄດ້ຢູ່ຄົນດຽວ?*

**ຈຸດສຳຄັນໃນບົດຮຽນ:** ເຖິງແມ່ນຕົກຢູ່ໃນພາວະມືດມົນ, ພຣະເຈົ້າບໍ່ໄດ້ປ່ອຍປະໄພ່ພົນຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ສຳລັບເດັກ, ມັນເປັນຄວາມຮູ້ສຶກຢ້ານກົວເມື່ອລາວຫຼົງວໄປອ້ອມຮອບແລະບໍ່ພົບພໍ່ແມ່. ຂ້າພະເຈົ້າໄດ້ເລາະຊື້ຂອງກັບລູກຊາຍຄົນເກົ່າງຂອງຂ້າພະເຈົ້າຄາວນຶ່ງລາວກໍຄິດເລາະເບິ່ງຂອງຂາຍດ້ວຍຕົວເອງ. ເມື່ອລາວຫຼົງວໄປຫຼຽວມາບໍ່ພົບຂ້າພະເຈົ້າລາວກໍມີສີໜ້າຕົກໃຈຢ້ານຂຶ້ນມາ. ພະນັກງານຮ້ານຄ້າໄດ້ປອບໃຈລາວແລະຖາມວ່າພໍ່ຊື່ຫຍັງ. ທັນໃດນັ້ນ ຂ້າພະເຈົ້າໄດ້ຍິນຊື່ຂ້າພະເຈົ້າຜ່ານທາງໂທຣະໂຂ່ງ, ບອກໃຫ້ຂ້າພະເຈົ້າໄປເອົາລູກຊາຍ.

ລູກຊາຍຂອງຂ້າພະເຈົ້າສະບາຍໃຈເມື່ອຂ້າພະເຈົ້າໄປຮອດໂຕະບໍຣິການ. ຂ້າພະເຈົ້າຍັງເຄືອງໃຈເມື່ອຄິດວ່າລາວອາດຈະເຊື່ອວ່າຂ້າພະເຈົ້າໜີປະລາວ. ທ່ານກໍອາດມີປະສົບການຢ່າງດຽວກັນ-ໃນຖານະລູກຫຼືຜູ້ປົກຄອງ! ຜູ້ປົກຄອງທີ່ບໍ່ເຫັນລູກຊົ່ວຂນະສັ້ນໆໃນທີ່ສາທາຣະນະ. ບາງທີ ທ່ານອາດຈຳເຫດການເມື່ອຍັງນ້ອຍໄດ້ຕອນແນມບໍ່ເຫັນພໍ່ແມ່ຫຼືຜູ້ໃຫຍ່ ຊຶ່ງເພິ່ນປະທ່ານໃຫ້ຢູ່ຄົນດຽວ. ໜ້າເສັຽດາຍ, ພວກເຮົາຫຼາຍຄົນໄດ້ຜ່ານລະຍະເວລາອັນເຈັບປວດນີ້ ເມື່ອເຮົາຮູ້ສຶກວ່າພຣະເຈົ້າປະເຮົາ. ຂນະທີ່ເຮົາສຶກສາບົດຮຽນໃນສິ່ງທີ່ພຣະເຢຊູໄດ້ເວົ້າກ່ຽວກັບການສະເດັດກັບມາຂອງພຣະອົງຕໍ່ໄປນີ້, ພວກເຮົາຈະພົບເຫັນວ່າພຣະເຈົ້າຈະບໍ່ປະຖິ້ມເຮົາຈັກເທື່ອ ເມື່ອຄາວສຸດທ້າຍໃກ້ເຂົ້າມາ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**<u>1. ມັດທາຍ 24:15-16</u>.**

*15 "ເຫດສັນນັ້ນ ເມື່ອໃດທ່ານທັງຫຼາຍເຫັນສິ່ງທີ່ໜ້າກຽດໜ້າຊັງ ທີ່ເຮັດໃຫ້ເກີດວິບັດຕັ້ງຢູ່ໃນສະຖານທີ່ສັກສິດ ຕາມພຣະທັມທີ່ຊົງໄດ້ກ່າວໄວ້ດ້ວຍດານີເອນຜູ້ປະກາດພຣະທັມນັ້ນ (ໃຫ້ຜູ້ອ່ານເຂົ້າໃຈເອົາ), 16 ເມື່ອນັ້ນໃຫ້ຜູ້ທີ່ຢູ່ແຂວງຢູດາຍປົບໜີໄປຍັງພູ."*

ຄຳວ່າ *ໜ້າກຽດໜ້າຊັງ* ປາກົດ 120 ກວ່າຄັ້ງໃນພຣະຄັມພີ; ໃນແຕ່ລະກໍຣະນີ, ຄຳນີ້ໝາຍເຖິງສິ່ງທີ່ໜ້າລັງກຽດ. ໝວດເປັນຈະບັບ (ການແປພຣະຄັມພີພາສາເຮັບເຣີເປັນພາສາກຣີກ) ໄດ້ໃຊ້ພາສາກຣີກຄຳດຽວກັນເພື່ອອ້າງເຖິງສັດທີ່ບໍ່ສະອາດ (ເລວີ 11:10-13), ມາຍາກົນ ແລະ ການຄາດຄະເນ (ພຣະບັນຍັດສອງ 18:12), ພະທຽມ (ເຢເຣມີຢາ 4:1), ແລະສິ່ງໜ້າກຽດຊັງສຳລັບພຣະເຈົ້າ (ພຣະນິມິດ 17:4-5; 21:27). ສິ່ງໜ້າກຽດໜ້າຊັງກໍແມ່ນ "ຄວາມເລວຊາມທີ່ໜ້າກຽດໜ້າຊັງ", ໜ້າຢ້ານກົວ, ຄວາມໂຫດຮ້າຍ, ພິທີກັມປ່າເຖື່ອນ, ຊຶ່ງເປັນການໄຫວ້ພະທຽມທີ່ຂັດກັບຫຼັກທັມແລະເປັນການໝິ່ນປມາດຄວາມບໍຣິສຸດຂອງພຣະເຈົ້າ.

ຖ້ອຍຄຳ"ໜ້າກຽດໜ້າຊັງ" ຖືກນຳໃຊ້ກ່ອນໝູ່ໃນພຣະທັມດານີເອນ. ບໍ່ມີປຶ້ມພຣະຄັມພີເດີມຫົວໃດມີການສອນຍຸກສຸດທ້າຍເກີນກວ່າພຣະທັມດານີເອນ. ທ່ານດານີເອນໃຊ້ຄຳວ່າ <u>ໜ້າກຽດໜ້າຊັງ</u>ໝາຍເຖິງການລົບລູ່ພຣະວິຫານກຸງເຢຣູຊາເລັມ (ດານີ

ເອນ 9:27). ນັກປຣາດຫຼາຍຄົນໄດ້ສັງເກດເຫັນບາງພາກສ່ວນຂອງຄຳທຳນວາຍໄດ້ຖືກບັງເກີດຂຶ້ນໃນປີ 176 ກ່ອນ ຄສ. ຜູ້ປົກຄອງຊາວກຣີກຊື່ ແອນຕີໂອຈັສ ທີສີ່ ເອປີເຟນ (Antiochus IV Epiphanes) ໄດ້ສ້າງແທ່ນບູຊາພຣະຊີອຸສ (Zeus) ຢູ່ເໜືອແທ່ນເຄື່ອງເຜົາບູຊາໃນພຣະວິຫານກຸງເຢຣູຊາເລັມ. ແອນຕີໂອຈັສ ທີສີ່ ໄດ້ເຮັດສິ່ງນີ້ໂດຍສະເພາະທີ່ຖືວ່າເປັນສິ່ງຊົ່ວຮ້າຍຕໍ່ຊາວເຮັບເຣີ ຄືການຖວາຍສັດບໍ່ສະອາດ-ໝູ-ເທິງແທ່ນບູຊາພຣະວິຫານ.

ຕັ້ງແຕ່ພຣະເຢຊູໄດ້ກ່າວເກືອບສອງຮ້ອຍປີຫຼັງຈາກເຫດການເຫຼົ່ານັ້ນ, ພຣະອົງໄດ້ຊີ້ໃຫ້ເຫັນເຫດການອື່ນອີກອັນນຶ່ງໃນອານາຄົດຂ້າງໜ້າ. ນັກປຣາດດ້ານພຣະຄັມພີຫຼາຍຄົນເຊື່ອວ່າພຣະເຢຊູໝາຍເຖິງການທຳລາຍພຣະວິຫານໃນປີ 70 ຫຼັງ ຄສ. ມີຄຳກ່າວວ່າ ເວລາຊາວໂຣມັນທຳລາຍພຣະວິຫານຂອງຊາວຢິວ, ເຂົາໄດ້ປັກທຸງພວການອກຣີດເໜືອຊາກຫັກພັງຂອງພຣະວິຫານ. ຖ້ອຍຄຳຂອງພຣະເຢຊູທີ່ເວົ້າວ່າ *"ເມື່ອນັ້ນໃຫ້ຜູ້ທີ່ຢູ່ແຂວງຢູດາຍປົບໜີໄປຍັງພູ"* ຍັງໃຫ້ການສນັບສນູນພາບນີ້ນັບຕັ້ງແຕ່ຊາວຢິວໄດ້ປົບໜີໃນຍຸກສມັຍການຮຸກຮານຂອງຊາວໂຣມັນໃນປີ 70 ຫຼັງ ຄສ.

*ມີພືບດີຫຍັງທີ່ຮູ້ຈັກໝາຍສຳຄັນຍຸກສຸດທ້າຍ?*

ນັກປຣາດຫຼາຍຄົນຍັງໄດ້ເຫັນຖ້ອຍຄຳຂອງພຣະເຢຊູເປັນການອ້າງເຖິງເຫດການໃນອານາຄົດກ່ຽວຂ້ອງກັບຜູ້ຕໍ່ສູ້ພຣະຄຣິດ. ຄວາມສຳເຣັດສູງສຸດຂອງຄຳພະຍາກອນນີ້ຈະເກີດຂຶ້ນ ເມື່ອຜູ້ຕໍ່ສູ້ພຣະຄຣິດເຮັດບາງສິ່ງບາງຢ່າງຄ້າຍກັບສິ່ງທີ່ ແອນຕີໂອຈັສ ເອປີເຟນ ໄດ້ເຮັດ. ພຣະນິມິດ 13:14 ບອກລ່ວງໜ້າວ່າ ຜູ້ຕໍ່ສູ້ພຣະຄຣິດໄດ້ສະທ້ອນໃຫ້ເຫັນພາບວ່າໄພ່ພົນຖືກບັງຂັບໃຫ້ນະມັສການ. ສຳລັບການເຮັດໃຫ້ພຣະວິຫານຂອງພຣະເຈົ້າກາຍເປັນບ່ອນນະມັສການທີ່ຜິດເປັນສິ່ງ *"ໜ້າກຽດໜ້າຊັງ"* ແທ້ໆ. 2 ເທຊະໂລນິກ 2:4 ຍັງໄດ້ສນັບສນູນພາບນີ້: *"ຄືຜູ້ຄັດຄ້ານແລະຍົກຕົວຂຶ້ນຕໍ່ສູ້ທຸກສິ່ງທີ່ມີຊື່ວ່າເປັນພຣະຫຼືທີ່ເຂົາຂາບໄຫວ້ນະມັດສການນັ້ນມັນຈຶ່ງຈະໄດ້ນັ່ງລົງໃນພຣະວິຫານຂອງພຣະເຈົ້າ ສະແດງຕົວເປັນເໝືອນພຣະເຈົ້າ."* ສິ່ງນຶ່ງທີ່ຊັດແຈ້ງ: ພຣະເຢຊູຢາກໃຫ້ສາວົກຂອງພຣະອົງ-ແລະເຮົາ!-ຮູ້ຈັກວ່າແມ່ນຫຍັງກຳລັງຈະມາ. ແລະເວລາພຣະວິຫານຂອງພຣະເຈົ້າຖືກລົບລູ່, ພວກເຮົາສາມາດຮູ້ໄດ້ວ່າທີ່ສຸດກຳລັງມາ.

**2. <u>ມັດທາຍ 24:17-20</u>.**

[17] *"ຜູ້ທີ່ຢູ່ເທິງຫຼັງຄາເຮືອນ ຢ່າໃຫ້ລົງມາເກັບເອົາສິ່ງຂອງທີ່ຢູ່ໃນເຮືອນຂອງຕົນອອກໄປ.* [18] *ສ່ວນຜູ້ທີ່ຢູ່ຕາມທົ່ງນາກໍຢ່າຕ່າວ*
*ຄືນມາເອົາເສື້ອຜ້າຂອງຕົນ.* [19] *ແຕ່ໃນວັນເຫຼົ່ານັ້ນເປັນໜ້າເວທນາເຕັມທີຕໍ່ຜູ້ຍິງທີ່ມີທ້ອງແລະມີລູກອ່ອນກິນນົມຢູ່.* [20] *ຈົ່ງອ້ອນ-*
*ວອນຂໍເພື່ອການທີ່ທ່ານຕ້ອງໜີນັ້ນຈະບໍ່ຕົກໃນລະດູໜາວຫຼືໃນວັນຊະບາໂຕ."*

ພຣະເຢຊູຊີ້ບອກໃນພາກນີ້ວ່າ ຍຸກສຸດທ້າຍຈະນຳຄວາມພິນາດມາໃຫ້ໄວຈົນຜູ້ເຊື່ອບໍ່ຕ້ອງເສັຍເວລາຊອກຫາບ່ອນກຳບັງ. ເພື່ອນຂອງຂ້າພະເຈົ້າເລົ່າເຣື່ອງເຮືອນຂອງລາວຖືກທຳລາຍດ້ວຍລົມພາຍຸໂທເນໂດ(ທໍ່ວກຸດ)ຫຼາຍປີກ່ອນ. ສັນຍານເຕືອນພັຍພາຍຸໄດ້ມາເຖິງໄວຈົນລາວບໍ່ມີເວລາພຽງພໍທີ່ຈະຫອບເອົາເຄື່ອງຂອງອອກຈາກບ້ານຂອງລາວ. ສະຖານະການແບບນັ້ນແມ່ນຈຸດສຳຄັນທີ່ພຣະຄຣິດໄດ້ບອກກ່ຽວກັບສິ່ງຂອງທີ່ຈະເອົາປົບໜີໃນເວລາທີ່ຄວາມໜ້າກຽດໜ້າຊັງເກີດຂຶ້ນ. *"ຜູ້ທີ່ຢູ່ເທິງຫຼັງຄາເຮືອນ ຢ່າໃຫ້ລົງມາເກັບເອົາສິ່ງຂອງທີ່ຢູ່ໃນເຮືອນຂອງຕົນອອກໄປ."* ປາກົດວ່າບາງຄົນປຸກເຮືອນໃກ້ກຳແພງເມືອງ. ເວລາເຂົາເຫັນກອງທັບຝ່າຍກົງກັນຂ້າມ, ການປົບໜີທັນທີທັນໃດເປັນເຣື່ອງໃຫຍ່. ພຣະເຢຊູໄດ້ເນັ້ນຄວາມລຳບາກແລະສິ່ງຈຳເປັນສຳລັບປົບໜີທັນທີທັນໃດມີສອງຕົວຢ່າງ. ຜູ້ທຳງານຢູ່ຕາມທົ່ງນາບໍ່ຕ້ອງຊັກຊ້າ, ແມ່ນແຕ່ເອົາເສື້ອຜ້າຂອງຕົນ. ເສື້ອຜ້ານີ້ຄືດັ່ງເສື້ອຄຸມນອກກາຍ, ຊຶ່ງເປັນສິ່ງຈຳເປັນໃຊ້ທີ່ນອນ. ຈຸດຂອງພຣະຄຣິດແມ່ນເວລານັ້ນຈະລຳບາກຫຼາຍຈົນປະຊາຊົນບໍ່ສາມາດກັບໄປເອົາແມ້ກະທັ້ງເຄື່ອງໃຊ້ທີ່ຈຳເປັນສຳລັບຊີວິດ.

*ພວກເຮົາຈະຕຽມຕົວຢ່າງໃດສຳລັບເວລາຫຍຸ້ງຍາກ?*

ຕົວຢ່າງທີ່ສອງຂອງພຣະເຢຊູແມ່ນ "ຍິງມີທ້ອງແລະມີລູກອ່ອນກິນນົມຢູ່." ນີ້ບໍ່ໄດ້ໝາຍເຖິງການ "ສາບແຊ່ງ"ຜູ້ຍິງທີ່ມີລູກ; ພຽງແຕ່ອະທິບາຍຄວາມຫຍຸ້ງຍາກເພີ່ມທະວີໃນການເດີນທາງເວລາມີທ້ອງ. ພຣະເຢຊູໄດ້ກ່າວວ່າສະຖານະການອີກອັນນຶ່ງຊຶ່ງສາມາດພິສູດວ່າຈະຕ້ອງໄດ້ປະເຊີນໃນຄາວສຸດທ້າຍນັ້ນແມ່ນ: ສະພາບອາກາດ.*"ຈົ່ງອ້ອນວອນຂໍ ເພື່ອການທີ່ທ່ານຕ້ອງໜີນັ້ນຈະບໍ່ຕົກໃນລະດູໜາວ."* ພຣະອົງຊາບວ່າຄວາມໜາວແລະຄວາມໂຫດຮ້າຍຂອງສະພາບອາກາດອາດເຮັດໃຫ້ການເດີນທາງຍາກຂຶ້ນຢ່າງບໍ່ຕ້ອງສົງສັຍບໍ່ວ່າໃນສະຖານະການໃດ, ສະນັ້ນພຣະອົງຈຶ່ງໜູນໃຈໃຫ້ອ້ອນວອນ. ສິ່ງໜ້າຢ້ານບໍ່ຢຸດບໍ່ຢ່ອນລໍຖ້າຢູ່ນັ້ນຮຽກຮ້ອງຜູ້ເຊື່ອຕັ້ງໃຈປົບໜີທ່າດຽວ.

ຕໍ່ສາວົກຊາວຢິວ, ພຣະເຢຊູກໍໄດ້ຮ້ອງຂໍໃຫ້ເຂົາອ້ອນວອນຢ່າໃຫ້ການປົບໜີຂອງເຂົາຕົກໃສ່ "ວັນສະບາໂຕ." ຊາວຢິວທີ່ເຊື່ອຈະບໍ່ເດີນທາງເກີນກວ່າເຄິ່ງໄມລ໌ໃນວັນສະບາໂຕ. ນັ້ນກໍຈະເພີ່ມຄວາມຫຍຸ້ງຍາກເພາະປະຕູເມືອງປິດ, ຮ້ານຄ້າທຸກແຫ່ງປິດ, ແລະຈະຕິດຕໍ່ການໂດຍສານກໍບໍ່ມີ. ເມື່ອມັນມາເຖິງກໍຈະປາກົດວ່າເວລາສຸດທ້າຍມາຮອດແລ້ວ, ຄວາມທຸກລຳບາກທີ່ມາພ້ອມວັນນັ້ນຈະມາທັນທີທັນໃດ. ຄຳເວົ້າຂອງພຣະເຢຊູຊຸກຍູ້ເຮົາໃຫ້ຕຽມຕົວ.

## <u>3. ມັດທາຍ 24:21-22</u>.

*21 "ດ້ວຍວ່າໃນຄາວນັ້ນຈະມີຄວາມທຸກລຳບາກອັນໃຫຍ່ຫຼວງຢ່າງບໍ່ມີເຄີຍເກີດມີມາຕັ້ງແຕ່ຕົ້ນເດີມໂລກຈົນເຖິງບັດນີ້ແລະເມືອ*
*ໜ້າຈະບໍ່ມີຕໍ່ໄປອີກຈັກເທື່ອ. 22 ແລະຖ້າວັນທັງຫຼາຍນັ້ນບໍ່ໄດ້ຊົງບັນດານໃຫ້ສັ້ນເຂົ້າຈະບໍ່ມີມະນຸດຄົນໃດລອດພົ້ນໄດ້ ແຕ່ເພາະ*
*ເຫັນແກ່ພວກທີ່ຊົງເລືອກໄວ້ນັ້ນ ວັນເຫຼົ່ານັ້ນຈຶ່ງໄດ້ຊົງບັນດານໃຫ້ສັ້ນເຂົ້າ."*

*ທ່ານພົບເຫັນຄວາມລຳບາກຫຍັງກ່ຽວກັບບົດນີ້?*

ເມື່ອນັກປຣາດຫຼາຍຄົນພົບຂໍ້ພຣະຄັມພີກ່ອນນີ້ອ້າງເຖິງການຫຼົ້ມສລາຍຂອງກຸງເຢຣູຊາເລັມໃນປີ 70 ຫຼັງ ຄສ. ຂໍ້ 21 ຊີ້ໃຫ້ເຫັນເຫດການຕໍ່ຈາກນັ້ນ. ແນ່ນອນ "ຄວາມທຸກລຳບາກອັນໃຫຍ່ຫຼວງ" ໃນຂໍ້ 21 ບໍ່ອາດນຳໃຊ້ສະເພາະກັບການທຳລາຍກຸງເຢຣູຊາເລັມເທົ່ານັ້ນ. ພວກເຮົາຮູ້ຈາກປວັດສາດວ່າພວກເຮົາໄດ້ຜ່ານເຫດການທີ່ເລວຮ້າຍຫຼາຍນັບແຕ່ນັ້ນມາ.

ບໍ່ມີລະຍະເວລາໃດໃນປວັດສາດທີ່ແທດເໝາະກັບຄຳບັລຍາຍຂອງເຫດການທີ່ຈະເກີດຂຶ້ນໃນເວລານີ້. ໃນຂນະບາງມູມມອງຖ້ອຍຄຳຂອງພຣະເຢຊູດັ່ງສຳນວນຖ້ອຍຄຳພຣະຄັມພີເດີມຂອງຊາວເຮັບເຣີ ຊຶ່ງໝາຍເຖິງບາງສິ່ງບາງຢ່າງທີ່ຜິດປົກກະຕິ, ຄົນອື່ນໆເຫັນການອ້າງເຖິງລະຍະເວລາແຫ່ງຄວາມທຸກລຳບາກຂນາດໃຫຍ່ຕລອດພຣະທັມພຣະນິມິດ.

ພຣະຄຣິດໄດ້ອະທິບາຍເວລານຶ່ງເມື່ອຄົນຊົ່ວຮ້າຍຂຶ້ນຄອງດ້ວຍຄວາມອັມມະຫິດ. ເມື່ອການກັບມາຂອງພຣະຄຣິດໃກ້ເຂົ້າມາ, ຂໍ້ບັງຂັບຄົນຊົ່ວຮ້າຍຈະຖືກທຳລາຍ, ຂໍ້ຈຳກັດຈະຖືກລະເລີຍ, ແລະ ຄວາມປ່າເຖື່ອນຈະຖ້ວມແຜ່ນດິນໂລກ. ພຣະເຈົ້າຈະເລີ້ມພິພາກສາ ເມື່ອນັ້ນພັຍພິບັດຮ້າຍແຮງຈະລ້າງແຜ່ນດິນໂລກ. ທຸກສິ່ງຈະມືດມົນແລ້ວຄົນຈະສແວງຫາການປົດປ່ອຍຈາກຄວາມຕາຍ (ພຣະນິມິດ 9:6). ຄວາມລຳບາກມັກຈະພາໃຫ້ຄົນຊອກຫາພຣະເຈົ້າເພື່ອການຊ່ອຍເຫຼືອ, ແຕ່ນັ້ນບໍ່ແມ່ນກໍຣະນີລະຍະຄວາມທຸກລຳບາກອັນໃຫຍ່ນີ້. ສຸດແສນຍາກ ດັ່ງຂໍ້ພຣະຄັມພີຕອນນີ້ທີ່ເຮົາຈະຕ້ອງອ່ານ, ພວກເຮົາຕ້ອງສຳນຶກພຣະຄຸນຢ່າງເລິກເຊິ່ງ ຕໍ່ຄວາມເມດຕາຂອງພຣະເຈົ້າ. ພຣະຄຣິດໝາຍຄວາມວ່າ, ໃນຄວາມເມດຕາຂອງພຣະອົງ ພຣະອົງຈະບໍ່ອະນຸຍາດໃຫ້ຄວາມທຸກລຳບາກຍືດເຍື້ອຕລອດໄປ. ພຣະເຈົ້າໄດ້ກຳນົດໄວ້ລ່ວງໜ້າວ່າສມັຍນັ້ນການທຳລາຍຈະຫຼຸດຜ່ອນລົງ. ຄວາມທຸກທໍຣະມານຈະໃຫຍ່ຫຼວງ ຖ້າວ່າພຣະຜູ້ເປັນເຈົ້າປ່ອຍໃຫ້ຄວາມທຸກທໍຣະມານນັ້ນດຳເນີນຕໍ່ໄປ, ກໍຈະບໍ່ມີມະນຸດຄົນໃດລອດພົ້ນໄດ້. ເວົ້າອີກຢ່າງນຶ່ງວ່າ, "ຈະບໍ່ມີຜູ້ໃດໄດ້ຮັບຄວາມພົ້ນ." ຄວາມເມດຕາຂອງພຣະເຈົ້າຍິ່ງໃຫຍ່ຫຼາຍ, ພຣະອົງຈະສະກັດກັ້ນຄວາມທຸກລຳບາກດ້ວຍການກັບມາຂອງພຣະອົງ (ມັດທາຍ 24:29-31).

ເຫດຜົນສະເພາະຂອງພຣະເມດຕາຂອງພຣະເຈົ້າແມ່ນ "ຍ້ອນການເລືອກ." ນີ້ເປັນຄັ້ງແລກທີ່ຄຳວ່າ"ເລືອກ" ປາກົດໃນພຣະຄັມພີໃໝ່. ການເລືອກແມ່ນຜູ້ທີ່ວາງຄວາມເຊື່ອຂອງເຂົາໃນພຣະຄຣິດ. ຄຳນີ້ ເນັ້ນການລິເລີ້ມຂອງພຣະເຈົ້າໃນການໂຜດພວກເຮົາໃຫ້ພົ້ນ. ພວກເຮົາອາດໄດ້ປະເຊີນກັບ ຄວາມທຸກຍາກ, ບັນຫາ, ແລະຄວາມຍາກລຳບາກ. ແຕ່ພວກເຮົາຈະບໍ່ປະເຊີນໂດຍລຳພັງ. ພຣະອົງຢູ່ກັບເຮົາ, ຊຸກຍູ້ເຮົາ, ຊ່ອຍເຮົາອົດທົນ, ແລະປົດປ່ອຍເຮົາໃນທີ່ສຸດ.

*ຄວາມເມດຕາຂອງພຣະເຈົ້າໃນອາດີດຊ່ອຍທ່ານວາງໃຈໃນພຣະອົງໄດ້ແນວໃດ?*

## ນຳໃຊ້ໃນຊີວິດ

ແມ່ນແຕ່ໃນເວລາມືດມົນ, ພຣະເຈົ້າບໍ່ໄດ້ປ່ອຍປະໄພ່ພົນຂອງພຣະອົງ. ຈົ່ງເລືອກນຶ່ງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງຈົດລາຍການ.** ຈົດບາງເວລາສະເພາະທີ່ພຣະເຈົ້າຢູ່ທັ້ນເພື່ອທ່ານໃນຍາມຫຍູ້ງຍາກ, ມັນເປັນການງ່າຍທີ່ຈະຫຼົງລືມຕລອດເວລາທີ່ພຣະເຈົ້າສະເດັດມາເພື່ອເຮົາ. ການບັນທຶກສອງສາມຢ່າງລົງເປັນລາຍລັກອັກສອນຈະຊ່ອຍໃຫ້ທ່ານຈື່ຈຳພວກມັນໄດ້.
- **ຈົ່ງທ່ອງຈຳ.** ຈົ່ງທ່ອງຈຳຂໍ້ພຣະຄັມພີກ່ຽວກັບຄວາມສັດຊື່ຂອງພຣະເຈົ້າ. ນີ້ແມ່ນທາງທີ່ດີທີ່ສຸດທາງນຶ່ງເພື່ອຈຳໃສ່ໃຈວ່າພຣະເຈົ້າຈະບໍ່ປະຖິ້ມທ່ານ. ແນະນຳຂໍ້ພຣະຄັມພີບາງຂໍ້ ພຄຄ. 3:23-23, ຮຣ. 10:23, 2 ຕມທ. 2:13.
- **ຈົ່ງຮັບໃຊ້.** ຈົ່ງອ້ອນວອນພຣະເຈົ້າເພື່ອໂອກາດອອກໄປຢ້ຽມຢາມບາງຄົນທີ່ຮູ້ສຶກປ່ອຍປະ. 2 ໂກຣິນໂທ 1:3 ຊຸກຍູ້ເຮົາຊ່ອຍເລົ້າໂລມໃຈຄົນອື່ນດ້ວຍການເລົ້າໂລມໃຈທີ່ເຮົາໄດ້ຮັບຈາກພຣະເຈົ້າ. ບໍ່ວ່າຈະເປັນເດັກທີ່ຂັດສົນ, ເພື່ອນບ້ານທີ່ມີຄວາມຕ້ອງການ, ຫຼືຜູ້ຊະຣາໃນໂບດຂອງທ່ານ, ວາງໃຈພຣະເຈົ້າທີ່ຈະປະທານໂອກາດເຕືອນຄົນທັງຫຼາຍວ່າພຣະເຈົ້າຈະບໍ່ປະຖິ້ມເຂົາຈັກເທື່ອ.

ພວກເຮົາສ່ວນຫຼາຍມີອາການເສັຍສຸຂພາບດ້ານໃດດ້ານນຶ່ງຫຼືດ້ານອື່ນໆ. ມັນອາດເປັນຕາຢ້ານແນ່ນອນ. ແຕ່ຈະເປັນການດີທາກຮູ້ວ່າ ຖ້າຄົນເຫຼົ່ານັ້ນທີ່ຮູ້ຈັກພຣະຄຣິດ ຈະບໍ່ປະສົບອາການເຈັບປວດນັ້ນຈັກເທື່ອ. ພຣະອົງຢູ່ກັບເຮົາແລະຈະຢູ່ກັບເຮົາຈົນເຖິງທີ່ສຸດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**